ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

**ບົດບັນທຶກກອງປະຊຸມ**
**ຄະນະກຳມະການປະສານງານກອງທຶນໂລກ**

ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນເປັນຄັ້ງທີ 01 ຂອງສົກປີ 2021 ໃນວັນອັງຄານ ທີ 09 ກຸມພາ 2021 ເວລາ 13:30 ຫາ 16:30 ທີ່ຫ້ອງປະຊຸມຊັ້ນ 1 ກະຊວງສາທາລະນະສຸກ ໂດຍການເປັນປະທານຮ່ວມຂອງ ທ່ານ ຮສ. ດຣ. ພູທອນ ເມືອງປາກ, ຮອງລັດຖະມົນຕີກະຊວງສາທາລະນະສຸກ ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ.

ກອງປະຊຸມຄັ້ງນີ້ໄດ້ປະກອບມີຫຼາຍພາກສ່ວນຜູ້ເຂົ້າຮ່ວມເຊັ່ນ: ສະມາຊິກ ແລະ ຕົວແທນ ຂອງຄະນະກຳມະການປະສານງານກອງທຶນໂລກ (CCM) ຈຳນວນ 17 ທ່ານ (ມີສິດອອກສຽງໄດ້ 17 ທ່ານ) ແລະ ພາກສ່ວນອື່ນໆຈຳນວນ 18 ທ່ານ ເຊິ່ງຕາງໜ້າຈາກ ຄະນະກຳມະການກວດກາຂອງ CCM, ຄະນະກຳມະການຂົນຂວາຍແຫຼ່ງທຶນຂອງ CCM, ຫົວໜ້າກົມແຜນການ ແລະ ຮ່ວມມື ກະຊວງສາທາລະນະສຸກ, ຜູ້ຕາງໜ້າຈາກໂຄງການ 3 ພະຍາດ, ໜ່ວຍງານບໍລິຫານຄຸ້ມຄອງໂຄງການກອງທຶນໂລກ, ບັນດາຄູ່ຮ່ວມງານ ແລະ ກອງເລຂາ CCM, ລວມທັງໝົດ 35 ທ່ານ.

**1. ວາລະກອງປະຊຸມ:**

1. ລາຍງານການຈັດຕັ້ງປະຕິບັດແຜນງານປະຈຳສົກປີງົບປະມານ 2019 – 2020 ຂອງຄະນະກ□ມະການປະສານງານກອງທຶນໂລກ;
2. ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຮອບປະຈຸບັນ ແລະ ການກະກຽມເພື່ອຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຮອບໃໝ່ ຂອງກອງທຶນໂລກໃຫ້ແກ່ 3 ແຜນງານ (ພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ)
3. ຂະບວນການວິວັດຂອງ CCM ແລະ ຜົນການປະເມີນ ພ້ອມທັງການກຳນົດກິດຈະກຳທີ່ເປັນບຸລິມະສິດເພື່ອສືບຕໍ່ຂະບວນການວິວັດ - ໂດຍຜ່ານ Video-Call ກັບ CCM Hub ແລະ TA;
4. ບັນຫາອື່ນໆ:

**5. ສະຫຼຸບສັງລວມບັນດາຈຸດສຳຄັນຂອງກອງປະຊຸມ:**

ກ່ອນຈະກ້າວເຂົ້າວາລະກອງປະຊຸມ ກອງເລຂາ CCM ໄດ້ຢືນຢັນອົງປະກອບຂອງກອງປະຊຸມແມ່ນພຽງພໍ ແລະ ໄດ້ຕົກລົງຍ້າຍວາລະກອງປະຊຸມທີ 3 ເຂົ້າໄປແທນວາລະທີ 2 ເນື່ອງຈາກວ່າ ທ່ານ ປະທານ CCM ຈະອອກເດີນທາງໄປຍັງນະຄອນຫຼວງພະບາງໃນເວລາ 15:00 ໂມງ ປະຕິບັດວຽກງານອັນຮີບດ່ວນທາງລັດຖະການ. ພ້ອມດຽວກັນນີ້ ກອງເລຂາ CCM ກໍ່ໄດ້ລາຍງານຕໍ່ກອງປະຊຸມກ່ຽວກັບການຕິດຕາມການຈັດຕັ້ງປະຕິບັດໜ້າວຽກທີ່ໄດ້ສະເໜີໃນກອງປະຊຸມ CCM ຄັ້ງຜ່ານມາ ຕາມທີ່ໄດ້ຕົກລົງກັນໃນກອງປະຊຸມ OC ຄັ້ງວັນທີ 21 ມັງກອນ 2021 ທີ່ຜ່ານມານີ້ ຊຶ່ງລາຍລະອຽດໄດ້ລວມເຂົ້າໃນບົດສະເໜີຂອງ PMU ໃນຫົວຂໍ້ກ່ຽວກັບການລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຂອງກອງທຶນໂລກ.

**ວາລະກອງປະຊຸມທີ 1: ລາຍງານການຈັດຕັ້ງປະຕິບັດແຜນງານປະຈຳສົກປີງົບປະມານ 2019 – 2020 ຂອງຄະນະກຳມະການປະສານງານກອງທຶນໂລກ.**

ກອງເລຂາ CCM ໄດ້ລາຍງານກ່ຽວກັບການໃຊ້ຈ່າຍປະຈຳປີ ແລະ ບົດປະເມີນຜົນວຽກງານປະຈຳປີຂອງ CCM ເຊິ່ງໄດ້ສົ່ງຜ່ານທາງອີເມວເຖິງ CCM ແລະ CCM Hub ກອງທຶນໂລກກ່ອນທ້າຍເດືອນມັງກອນທີ່ຜ່ານມາ ຕາມການແນະນຳຂອງກອງທຶນໂລກ. ຫຼັງຈາກນັ້ນ, ກອງທຶນໂລກໄດ້ທົບທວນຄືນ ແລະ ເຫັນດີຕາມບົດລາຍງານການໃຊ້ຈ່າຍ ແລະ ບົດປະເມີນຜົນວຽກງານປະຈຳປີຂອງ CCM. ໃນກອງປະຊຸມຄັ້ງນີ້, ກອງເລຂາໄດ້ນຳສະເໜີບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີຂອງແຜນວຽກ CCM ສົກປີ 2019-2020. ຈຸດສ□າຄັນຂອງການນຳສະເໜີມີດັ່ງລຸ່ມນີ້:

- ແຜນວຽກ ພ້ອມທັງງົບປະມານຂອງ CCM ປະຈຳສົກປີ 2019-2020 ໄດ້ຖືກຮັບຮອງຈາກ CCM ແລະ ໄດ້ຈັດຕັ້ງປະຕິບັດຕາມແຜນ;
- ໄດ້ລົງຕິດຕາມກວດກາ 2 ຄັ້ງ ຕາມແຜນການ, ບົດລາຍງານໄດ້ຖືກແຈກຢາຍໃຫ້ CCM ແລະ ບັນດາຄູ່ຮ່ວມງານທັງໝົດ, ລວມທັງ CCM Website and ກອງທຶນໂລກ;
- ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ ແລະ ຂໍ້ແນະນຳຕໍ່ບົດລາຍງານຈາກກອງທຶນໂລກໄດ້ຖືກນຳສະເໜີແລະສົນທະນາໃນກອງປະຊຸມ OC ແລະ CCM ຕາມຮອບວຽນການລາຍງານຂອງ PR ໃຫ້ກອງທຶນໂລກ;
- ໄດ້ປະເມີນການຈັດຕັ້ງປະຕິບັດຕາມເງື່ອນໄຂຂອງກອງທຶນໂລກ (EPA) ແລະ CCM ໄດ້ຮັບຮອງເອົາຜົນຂອງການປະເມີນໃນກອງປະຊຸມຂອງຕົນຄັ້ງວັນທີ 6 ເດືອນກຸມພາ 2020. ອີງຕາມການປະເມີນທຽບໃສ່ຄວາມຕ້ອງການໃນແຕ່ລະເງື່ອນໄຂ (ER) ແລະມາດຕະຖານຂັ້ນຕໍ່າ (MS) ຂອງ CCM ສປປ ລາວ ໃນຊຸມປີທີ່ຜ່ານມາ, ຕົວຊີ້ວັດທັງໝົດຂອງທັງ ER ແລະ MS ຈາກ 3-5 ແມ່ນໄດ້ບັນລຸໂດຍສົມບູນ. ສຳລັບເງື່ອນໄຂທີ 6, CCM ຍັງໄດ້ບັນລຸຕົວຊີ້ວັດເກືອບທັງໝົດ, ຍົກເວັ້ນ 4 ຕົວຊີ້ວັດທີ່ເພີ່ມເຂົ້າໃໝ່ ເຊິ່ງກ່ຽວຂ້ອງກັບຫຼັກຈັນຍາບັນແມ່ນຍັງບໍ່ທັນບັນລຸ. ອີງໃສ່ຜົນໄດ້ຮັບ, ບັນດາກິດຈະກຳຂອງແຜນການປັບປຸງໄດ້ກຳນົດ ແລະ ຮັບຮອງໂດຍ CCM ເຊິ່ງໄດ້ສຸມໃສ່ວຽກງານເພື່ອບັນລຸການຈັດຕັ້ງປະຕິບັດ 4 ຕົວຊີ້ວັດໃໝ່.
- ການປະເມີນຜົນການປະຕິບັດວຽກງານກອງເລຂາ CCM ໂດຍລວມໄດ້ຖືກດຳເນີນໃນກອງປະຊຸມຄົບຄະນະ CCM ທີ່ຈັດຂຶ້ນໃນວັນທີ 6 ກຸມພາ 2020. ສະມາຊິກ CCM ໄດ້ຕີລາຄາການປະຕິບັດວຽກງານຂອງກອງເລຂາ CCM ວ່າ ປະຕິບັດໄດ້ດີຫຼາຍ: 42.86%, ປະຕິບັດໄດ້ດີ: 51,79%, ມີບັນຫາເລັກໆນ້ອຍໆ: 3.57%, ແລະ ບັນຫາຫຼາຍ: 1,79% (ເຫດຜົນທີ່ຢູ່ເບື້ອງຫຼັງອາດກ່ຽວຂ້ອງກັບເອກະສານເກືອບທັງໝົດ ເປັນພາສາອັງກິດ ແລະ ສະມາຊິກບາງຄົນກໍ່ບໍ່ເຂົ້າໃຈພາສາອັງກິດ). ຜົນໄດ້ຮັບຂອງການປະເມີນໄດ້ຖືກລວມເຂົ້າໃນບົດບັນທຶກກອງປະຊຸມ CCM ແລະ ໄດ້ສົ່ງໃຫ້ CCM Hub;
- ບັນຊີລາຍຊື່ຂອງສະມາຊິກ CCM ແລະ ຄະນະກຳມະການຕ່າງໆ ໄດ້ມີການດັດແກ້ ເມື່ອມີການປ່ຽນແປງ. ອີງຕາມກອງປະຊຸມຄົບຄະນະຂອງ CCM ຄັ້ງວັນທີ 25 ພຶກສະພາ 2019, ໄດ້ເຫັນດີໃຫ້ເລື່ອນຂະບວນການກະກຽມເລືອກຕັ້ງເອົາສະມາຊິກໃໝ່ ຈົນກວ່າການກຳນົດໂຄງຮ່າງການຈັດຕັ້ງປະຕິບັດໂຄງການ HANSA ສຳເລັດ;
- ໂດຍອີງຕາມການສະເໜີ, ໄດ້ແນະນຳກ່ຽວກັບການຈັດຕັ້ງ, ພະລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງ CCM ແລະ ກຳມະການຕ່າງໆ ໃຫ້ແກ່ສະມາຊິກໃໝ່ຂອງ CCM ພ້ອມທັງໄດ້ສົ່ງເອກະສານໃຫ້;
- ນະໂຍບາຍກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ຍັງບໍ່ທັນຈຳເປັນຕ້ອງໄດ້ທົບທວນແລະດັດແກ້ເທື່ອໃນປີນີ້; ນະໂຍບາຍແລະມາດຕະການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດໄດ້ປະຕິບັດໃນທຸກກອງປະຊຸມຂອງ CCM;
- ບັນຊີມາດຕະການຫຼຸດຜ່ອນຂໍ້ຂັດແຍ່ງດ້ານຜົນປະໂຫຍດສະບັບປະຈຸບັນ ຍັງບໍ່ທັນຈຳເປັນຕ້ອງໄດ້ດັດແກ້ເທື່ອໃນປີນີ້.
- ສະມາຊິກ CCM ໃໝ່ເກືອບໝົດທຸກທ່ານ ໄດ້ເຊັນແບບຟອມແຈ້ງກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດແບບຟອມໄດ້ຖືກສົ່ງເຂົ້າໃນ GF Partner Portal;

- ອີງຕາມກອງປະຊຸມຄົບຄະນະຂອງ CCM ຄັ້ງວັນທີ 25 ພຶກສະພາ 2019, ໄດ້ເຫັນດີໃຫ້ເລື່ອນຂະບວນການທົບທວນແລະປັບປຸງໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດຂອງ CCM ຈົນກວ່າການກຳນົດໂຄງຮ່າງການຈັດຕັ້ງປະຕິບັດໂຄງການ HANSA ສຳເລັດ;
- ໄດ້ຈັດກອງປະຊຸມ CCM 5 ຄັ້ງ ສຳລັບສົກປີງົບປະມານນີ້ (ລວມທັງກອງປະຊຸມວິສາມັນ ໜຶ່ງ ຄັ້ງ);
- ໄດ້ຈັດກອງປະຊຸມ OC 7 ຄັ້ງ ສຳລັບສົກປີງົບປະມານນີ້ (ລວມທັງຈັດສະເພາະ OC ຫຼື ຈັດຮ່ວມກັບ RMC ແລະ ExCom) ອີງຕາມຄວາມຕ້ອງການຂອງວາລະກອງປະຊຸມ;
- ໄດ້ຈັດກອງປະຊຸມ RMC 5 ຄັ້ງ ສຳລັບສົກປີງົບປະມານນີ້ (ລວມທັງຈັດສະເພາະ RMC ຫຼື ຈັດຮ່ວມກັບ OC ແລະ ExCom) ອີງຕາມຄວາມຕ້ອງການຂອງວາລະກອງປະຊຸມ;
- ໄດ້ຈັດກອງປະຊຸມ ExCom 3 ຄັ້ງ ສຳລັບສົກປີງົບປະມານນີ້ (ລວມທັງຈັດສະເພາະ ExCom ຫຼື ຈັດຮ່ວມກັບ OC ແລະ RMC) ອີງຕາມຄວາມຕ້ອງການຂອງວາລະກອງປະຊຸມ;
- ເອກະສານ ແລະ ລາຍງານທີ່ສຳຄັນໄດ້ຖືກແປເປັນພາສາລາວ ແລະ ໄດ້ແຈກຢາຍໃຫ້ CCM ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ;
- CCM website ແລະ CCM contact lists ໃນລະບົບຂອງກອງທຶນໂລກ ໄດ້ຮັບການປັບປຸງ ແລະ ລາຍງານເປັນປົກກະຕິ ເພື່ອໃຫ້ທັນກັບສະພາບ;
- ທຸກໆການສື່ສານ ແລະ ເອກະສານທີ່ສຳຄັນ ໄດ້ຖືກແຈກຢາຍຜ່ານທາງ Email ພາຍໃນ/ລະຫວ່າງ CCM ແລະ ກອງທຶນໂລກ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ;
- CSO ໄດ້ຮັບງົບປະມານເພີ່ມເຕີມຈາກແຫຼ່ງອື່ນເພື່ອຈັດຕັ້ງປະຕິບັດກິດຈະກຳຂອງຕົນ. ຈຳນວນງົບປະມານ (2,500 ໂດລາ) ທີ່ໄດ້ຈັດສັນສຳລັບກອງປະຊຸມປະຈຳໄຕມາດຂອງ CSO ໄດ້ຖືກ ນຳໃຊ້ນ້ອຍ ເນື່ອງຈາກວ່າຄະນະກຳມະການປະສານງານ CSO ໄດ້ຈັດກອງປະຊຸມຂອງຕົນພຽງແຕ່ 1 ຄັ້ງ ເທົ່ານັ້ນໃນສົກປີງົບປະມານນີ້.

ກອງເລຂາ CCM ໄດ້ລາຍງານວ່າອັດຕາການນຳໃຊ້ງົບປະມານຂອງ CCM ໃນປີນີ້ແມ່ນ 96% ຍ້ອນວ່າ:
- CSO ໄດ້ຮັບການສະໜັບສະໜູນທຶນຈາກແຫຼ່ງທຶນອື່ນເພີ່ມເຕີມເພື່ອປະຕິບັດກິດຈະກຳ ແລະ ໄດ້ນຳໃຊ້ທຶນຂອງ CCM ເຂົ້າໃນການເຮັດກິດຈະກຳພຽງຄັ້ງດຽວເທົ່ານັ້ນ;
- ໄດ້ຈັດກອງປະຊຸມຮ່ວມລະຫວ່າງ OC, RMC ແລະ ExCom ຫຼາຍຄັ້ງໂດຍໄດ້ນຳໃຊ້ທຶນຮ່ວມກັນ;

**ຄຳເຫັນສຳຄັນຈາກກອງປະຊຸມ**
- ບໍ່ມີຄຳເຫັນເພີ່ມເຕີມກ່ຽວກັບບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີຂອງແຜນວຽກ CCM;
- ຜູ້ຕາງໜ້າຂອງຄະນະກຳມະການປະສານງານ CSO ໄດ້ລາຍງານຕໍ່ກອງປະຊຸມວ່າ ໄດ້ເລືອກເອົາສະມາຊິກໃໝ່ຂອງ CSO ເພື່ອເປັນຕົວແທນໃນ CCM ແລະ ໄດ້ປັບປຸງໂຄງຮ່າງການຈັດຕັ້ງໃໝ່ ແລະ ຈະຈັດກອງປະຊຸມຝຶກອົບຮົມໃຫ້ແກ່ສະມາຊິກໃໝ່ໃນໄວໆນີ້. ບັນຊີລາຍຊື່ຂອງສະມາຊິກໃໝ່ໄດ້ສົ່ງໃຫ້ກອງເລຂາ CCM ແລ້ວເພື່ອດຳເນີນການຕາມຂັ້ນຕອນຕໍ່ໄປ;
- ຮອງປະທານ CCM ໄດ້ສະເໜີໃຫ້ຄະນະກຳມະການປະສານງານ CSO ປັບປຸງໜ້າທີ່, ຄຸນນະພາບການເຮັດວຽກ, ການດູດຊຶມເງິນທຶນ ແລະ ການລາຍງານໃຫ້ທັນເວລາ ແລະ ຄວນສອດຄ່ອງກັບແຜນງານແຫ່ງຊາດ.

**ວາລະກອງປະຊຸມທີ 2: ຂະບວນການວິວັດຂອງ CCM ແລະ ຜົນການປະເມີນ ພ້ອມທັງການກຳນົດກິດຈະກຳທີ່ເປັນບຸລິມະສິດເພື່ອສືບຕໍ່ຂະບວນການວິວັດ - ໂດຍຜ່ານ Video-Call ກັບ CCM Hub ແລະ TA;**

ພາຍຫຼັງທີ່ໄດ້ຮັບຟັງການລາຍງານຈາກທີ່ປຶກສາ GF ໄດ້ນຳສະເໜີປະຫວັດຄວາມເປັນມາ ແລະ ຂັ້ນຕອນຂອງຂະບວນການວິວັດ CCM, ການກຳນົດກອບເວລາຂອງການເຮັດວຽກ, ຜົນໄດ້ຮັບຈາກການປະເມີນຂົງເຂດວຽກງານທີ່ຮັບຜິດຊອບຂອງ CCM, ຄຳຄິດເຫັນຈາກທີມງານກອງທຶນໂລກ ແລະ ກອງປະຊຸມຂອງຄະນະສະເພາະກິດທີ່ຜ່ານມາ.

**ສັງລວມຜົນສຳເລັດຈາກການປະຕິບັດຂະບວນການວິວັດ CCM ໃນ ສປປ ລາວ**

- ໄດ້ນຳສະເໜີຜົນໄດ້ຮັບຈາກຜົນໄດ້ຮັບຈາກການປະເມີນຂົງເຂດວຽກງານທີ່ຮັບຜິດຊອບຂອງ CCM ຕໍ່ຄະນະສະເພາະກິດ ແລະ ໄດ້ຮັບຮອງເອົາແລ້ວ;
- ທີ່ປຶກສາ CCM Evolution ໄດ້ສົ່ງບົດສັງລວມຜົນໄດ້ຮັບທີ່ຄະນະສະເພາະກິດໄດ້ຮັບຮອງໃຫ້ CCM Hub ກອງທຶນໂລກ;
- CCM Hub ກອງທຶນໂລກໄດ້ທົບທວນບົດສັງລວມ ແລະ ສະເໜີບັນດາກິດຈະກຳທີ່ເປັນບູລິມະສິດໃຫ້ທີ່ປຶກສາ ແລະ ຄະນະສະເພາະກິດຂອງຂະບວນການວິວັດ CCM ລາວ ;
- ຄະນະສະເພາະກິດຂອງຂະບວນການວິວັດ CCM ລາວ ໄດ້ຮັບຮອງເອົາບັນດາກິດຈະກຳທີ່ກອງທຶນໂລກສະເໜີ.

**ຂັ້ນຕອນຕໍ່ໄປ**

- ກອງເລຂາ CCM ຕ້ອງຈັດສັນງົບປະມານເຂົ້າໃນແຜນວຽກຂອງ CCM ອີງຕາມບັນດາກິດຈະກຳທີ່ເປັນບູລິມະສິດສະບັບຫຼ້າສຸດ ເພື່ອນຳສະເໜີຕໍ່ປະທານ CCM;
- ແນະນຳໃຫ້ CCM ແຕ່ງຕັ້ງຈຸດປະສານງານໃນແຕ່ລະຂົງເຂດຂອງຂະບວນການວິວັດ CCM ເພື່ອຕິດຕາມການຈັດຕັ້ງປະຕິບັດການກິດຈະກຳບູລິມະສິດ.

**ຄຳເຫັນສຳຄັນຈາກກອງປະຊຸມ**

- ທີມງານກອງທຶນໂລກໄດ້ມີຄຳເຫັນເພີ່ມເຕີມເຊັ່ນ: CCM Evolution ໄດ້ເປີດໂອກາດໃຫ້ມີການປັບປຸງຂົງເຂດວຽກງານທີ່ຮັບຜິດຊອບຂອງ CCM ໃນ 4 ດ້ານ ເຊິ່ງລວມທັງ ການເຊື່ອງໂຍງ CCM ເຂົ້າກັບໂຄງການ HANSA ແລະ ການກຳນົດຂອບເຂດເຮັດວຽກການຕິດຕາມກວດກາ ໃຫ້ສອດຄ່ອງກັບໂຄງສ້າງຂອງລັດຖະບານ ແຕ່ຕ້ອງມີວິທີການທີ່ຈະໃຫ້ CCM ກ້າວໄປເພື່ອບັນລຸຜົນຂອງຂະບວນການວິວັດ CCM ຢ່າງຕໍ່ເນື່ອງ, ພວກເຮົາຈະເຮັດແນວໃດເພື່ອສ້າງຄວາມແຕກຕ່າງກັບໄລຍະຜ່ານມາ ແລະ ຕ້ອງການການສະໜັບສະໜູນຫຍັງແດ່ໃນຂະບວນການນີ້;
- CCM ຄວນແຕ່ງຕັ້ງຈຸດປະສານງານເພື່ອຮັບຜິດຊອບໃນແຕ່ລະຂົງເຂດກິດຈະກຳຂອງຂະບວນການວິວັດ CCM;
- CCM ຄວນປະສານງານກັບແຜນງານແຫ່ງຊາດ ແລະ PR ເພື່ອກຳນົດຕາຕະລາງການຕິດຕາມກວດກາໃນແຕ່ລະກິດຈະກຳຂອງ CCM Evolution;
- ຜູ້ຕາງໜ້າຈາກ CCM Hub ໄດ້ແຈ້ງໃຫ້ຊາບວ່າ ການເບີກຈ່າຍທຶນຂອງ CCM ປີທີສອງແມ່ນກວມເອົາໄລຍະວັນທີ 1 ມັງກອນ ເຖິງ 31 ທັນວາ 2021 ເຊິ່ງໄດ້ຖືກດຳເນີນການແລ້ວ ແລະ ຄາດວ່າ CCM ຈະໄດ້ຮັບເງິນໃນໄວໆນີ້;
- ທີມງານກອງທຶນໂລກຈະເຮັດວຽກຮ່ວມກັບ CCM Hub ແລະ ທະນາຄານໂລກ ເພື່ອສືບຕໍ່ສະໜັບສະໜູນໜ້າທີວຽກງານຂອງ CCM;
- ກອງປະຊຸມໄດ້ຕົກລົງເຫັນດີກ່ຽວກັບກິດຈະກຳບູລິມະສິດ ເຊິ່ງທີ່ປຶກສາ ແລະ ທີມງານກອງທຶນໂລກໄດ້ສະເໜີມາ.

**ວາລະກອງປະຊຸມທີ 3: ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຮອບປະຈຸບັນ ແລະ ການກະກຽມເພື່ອຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຮອບໃໝ່ ຂອງກອງທຶນໂລກໃຫ້ແກ່ 3 ແຜນງານ (ພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ)**

**ແຜນງານຕ້ານເຮສໄອວີ ແລະ ຄວບຄຸມວັນນະໂລກ**

ພາຍຫຼັງທີ່ໄດ້ຮັບຟັງການສະເໜີຈາກຜູ້ຕາງໜ້າ PR PMU ລາຍງານຄວາມຄືບໜ້າ ກ່ຽວກັບທຶນຊ່ວຍເຫຼືອໃນປະຈຸບັນແລະການຈັດສັນທຶນຊ່ວຍເຫຼືອຮອບໃໝ່ ຂອງກອງທຶນໂລກ ເຂົ້າໃນໂຄງການ HIV ແລະ TB, ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄຳເຫັນ ແລະ ມີການສົນທະນາ ເຊິ່ງສັງລວມໄດ້ດັ່ງລຸ່ມນີ້:

- PMU ໄດ້ໃຫ້ຄວາມກະຈ່າງແຈ້ງເພີ່ມເຕີມກ່ຽວກັບເຫດຜົນຂອງອັດຕາການນຳໃຊ້ເງິນຂອງແຜນງານ HIV ທີ່ຍັງຕໍ່າ ເຊິ່ງເປັນຍ້ອນການຊັກຊ້າໃນການຈັດຊື້ເຄື່ອງກວດ, ອຸປະກອນແລະຜະລິດຕະພັນທາງການແພດ ສຳລັບທຶນຊ່ວຍເຫຼືອເພີ່ມເຕີມຂອງ COVID ທີ່ໄດ້ເພີ່ມເຂົ້າໃນແຜນງານ HIV. ໄດ້ມີແຜນການທີ່ຈະແຈ້ງໃນການຫັນປ່ຽນຈາກທຶນຊ່ວຍເຫຼືອໃນຮອບປັດຈຸບັນໄປເປັນທຶນຊ່ວຍເຫຼືອໃໝ່ ແລະ ແຜນການດັ່ງກ່າວໄດ້ຮັບຮອງເອົາຈາກກອງທຶນໂລກແລ້ວ;
- ສະເໜີໃຫ້ PMU ເຈລະຈາກັບກອງທຶນໂລກເພື່ອສືບຕໍ່ນຳໃຊ້ເງິນທີ່ຍັງເຫຼືອຂອງໂຄງການ ເຊິ່ງເປັນລາຍຮັບຈາກໂຄງການ PSI ເພື່ອເປັນກອງທຶນໝູນວຽນຂອງການຕະຫຼາດຂາຍຖົງຢາງອະນາໄມ. ກ່ຽວກັບບັນຫານີ້, ໂຄງການຕ້ອງໄດ້ກຳນົດກິດຈະກຳຕ່າງໆ ແລະ ສົ່ງໜັງສືພ້ອມດ້ວຍບົດສະເໜີຢ່າງເປັນທາງການ ເພື່ອເປັນເອກະສານສະໜັບສະໜູນ ໃຫ້ PMU ໃນໄວໆນີ້;
- ກ່ຽວກັບການແນະນຳໃຫ້ PMU ຮ່ວມກັບແຜນງານແຫ່ງຊາດ, CSO ແລະ ຄູ່ຮ່ວມງານສາກົນ ຈັດກອງປະຊຸມປຶກສາຫາລືເພື່ອກຳນົດຊ່ອງຫວ່າງໃນການຈັດຕັ້ງປະຕິບັດໂຄງການ SKPA2, ຕາງໜ້າສູນຕ້ານເອດ (CHAS) ໄດ້ກ່າວວ່າຂັ້ນຕອນການປະເມີນຜົນຂອງ SKPA2 ກຳລັງດຳເນີນຢູ່. ປະຈຸບັນ CHAS ແລະ CHIAs ແມ່ນໄດ້ອຳນວຍຄວາມສະດວກ ແລະ ປະສານງານກັບທີ່ປຶກສາ GF ເພື່ອຈັດກອງປະຊຸມປຶກສາຫາລື;
- ກ່ຽວກັບຄວາມເປັນຫ່ວງຕໍ່ການກຳນົດເວລາສຳລັບການຈັດຕັ້ງປະຕິບັດໂຄງການ HIV ແລະ TB ໃນຊ່ວງປີທີ 1 ພາຍໃຕ້ໂຄງການ HANSA ທີ່ຖືກຍົກຂຶ້ນມາ ແລະ ໄດ້ປຶກສາຫາລືໃນກອງປະຊຸມ OC ຄັ້ງກ່ອນໜ້ານີ້, CHAS ໄດ້ເປັນຕົວແທນໃຫ້ແກ່ແຜນງານແຫ່ງຊາດໄດ້ຊີ້ແຈ້ງວ່າສິ່ງທີ່ຈຳເປັນແລະຕ້ອງການດ່ວນນັ້ນແມ່ນ ການກຳນົດເວລາ ແລະ ງົບປະມານສຳລັບໂຄງການ HIV ແລະ TB ໃນຊ່ວງປີທີ 1. NCPO ໄດ້ເຫັນດີວ່າພວກເຮົາຄວນສຸມໃສ່ການບັນລຸ DLI ປີ 0 ແລະ ກິດຈະກຳຫຼັກໆທີ່ໂຄງການ HIV ແລະ TB ຈະປະຕິບັດເພື່ອບັນລຸເງື່ອນໄຂ DLI ປີທີ 1 ໂດຍໃຊ້ງົບປະມານ DLI ຈາກປີ 0 ນີ້. ປະຈຸບັນ NPCO ກຳລັງຢູ່ໃນຂັ້ນຕອນການສະເໜີ ເພື່ອຂໍໃຫ້ທະນາຄານໂລກໂອນຈຳນວນເງິນທັງໝົດ 3.8 ລ້ານໂດລາສະຫະລັດ ທີ່ແມ່ນຜົນສຳເລັດຕາມເງື່ອນໄຂຂອງ DLI ໃນຊ່ວງປີ 0 ໃຫ້ກະຊວງການເງິນ ແລະ ຄາດວ່າຈະໄດ້ສືບຕໍ່ໂອນເງິນໃຫ້ໂຄງການ HIV ແລະ TB ພາຍໃນກາງເດືອນກຸມພາ.

### ແຜນງານຄວບຄຸມ ແລະ ລຶບລ້າງໄຂ້ມະລາເຣຍ

ຜູ້ຕາງໜ້າ UNOPS ໄດ້ລາຍງານຄວາມຄືບໜ້າ ກ່ຽວກັບທຶນຊ່ວຍເຫຼືອ ແລະ ການຈັດສັນທຶນຊ່ວຍເຫຼືອຂອງກອງທຶນໂລກເຂົ້າໃນແຜນງານຄວບຄຸມ ແລະ ລຶບລ້າງໄຂ້ມະລາເຣຍ, ແລະ ສຸດທ້າຍໄດ້ເນັ້ນເຖິງວຽກງານທີ່ເປັນບູລິມະສິດໃນປະຈຸບັນເຊິ່ງສັງລວມໄດ້ດັ່ງລຸ່ມນີ້:

**ການເຊັນສັນຍາ:**

- ສັນຍາການຮ່ວມມືໂຄງການ (PCA) ລະຫວ່າງ MOH ແລະ PR UNOPS ໄດ້ເຊັນແລ້ວໃນວັນທີ 22 ມັງກອນ 2021;
- ໄດ້ເຊັນສັນຍາທຶນຊ່ວຍເຫຼືອລະຫວ່າງ PR UNOPS ກັບ CMPE, CHias, HPA, PEDA;
- ສຳລັບສັນຍາທຶນຊ່ວຍເຫຼືອຕ່າງໆກັບ DPC-HMIS ແລະ MPSC ແມ່ນກຳລັງດຳເນີນການຢູ່ (ຍັງລໍຖ້າບັນຊີທະນາຄານ);

**ການເບີກຈ່າຍເງິນ:**

- ຫຼັງຈາກ PCA ໄດ້ເຊັນແລ້ວ, PR UNOPS ໄດ້ໂອນເງິນຄັ້ງທຳອິດໃຫ້ທະນາຄານແຫ່ງ ສປປ ລາວ - ການຢັ້ງຢືນການໂອນເງິນແມ່ນໄດ້ແຈ້ງໄປຫາກົມການເງິນ (DOF) ໃນວັນທີ 5 ກຸມພາ;
- ໂຄງການ RAI3 ຈະນຳໃຊ້ບັນຊີຂອງ MOH ທີ່ໄດ້ເປີດຢູ່ທະນາຄານແຫ່ງ ສປປ ລາວ (ສຳລັບໂຄງການ RAI2 ແມ່ນນຳໃຊ້ບັນຊີຢູ່ທະນາຄານການຄ້າຕ່າງປະເທດລາວ - BCEL)-ເຊິ່ງແມ່ນຂັ້ນຕອນການເບີກຈ່າຍເງິນແບບໃໝ່. "ກອງທຶນໂລກຈະຕິດຕາມເບິ່ງກ່ຽວກັບກຳນົດເວລາຂອງການເບີກຈ່າຍພາຍໃຕ້ຂັ້ນຕອນແບບໃໝ່ນີ້ ກັບທະນາຄານ

ແຫ່ງ ສປປ ລາວ, ຖ້າເຫັນວ່າມີຄວາມຊັກຊ້າ ເຊິ່ງເປັນອຸປະສັກໃນການຈັດຕັ້ງປະຕິບັດແຜນງານດັ່ງກ່າວ, ກອງທຶນໂລກຈະສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອປັບປຸງຂັ້ນຕອນດັ່ງກ່າວ"

- PR UNOPS ກໍາລັງເຮັດວຽກຢ່າງໃກ້ຊິດກັບ DOF ເພື່ອດໍາເນີນການໂອນເງິນຄັ້ງທໍາອິດ ຈາກທະນາຄານແຫ່ງ ສປປ ລາວ ໄປຫາບັນຊີຜູ້ຮັບທຶນຍ່ອຍຢູ່ BCEL ພາຍໃນ 10 ວັນ.

**ຄໍາເຫັນສໍາຄັນຈາກກອງປະຊຸມ:**

- ຜູ້ຕາງໜ້າ CMPE ໄດ້ມີຄໍາເຫັນເພີ່ມເຕີມກ່ຽວກັບປະສົບການ ແລະ ບົດຮຽນທີ່ຖອດຖອນໃນການຈັດຕັ້ງປະຕິບັດໂຄງການ RAI2E ເຊັ່ນວ່າ ໄດ້ຮັບໃບບິນຮັບເງິນທີ່ມີລາຍເຊັນຄືກັນຈາກຜູ້ທີ່ໄດ້ຮັບເງິນຈູງໃຈຈາກບາງພື້ນທີ່ນັ້ນ ຈໍາເປັນຕ້ອງໄດ້ມີການຢັ້ງຢືນຈໍານວນເງິນທີ່ຈ່າຍໄປໂດຍທີ່ບໍ່ຖືກຕ້ອງ ຊຶ່ງມີມູນຄ່າສູງ ແລະ ອັດຕາການແຈກຈ່າຍມຸ້ງ (LLIN) ແມ່ນລຸດລົງເນື່ອງຈາກບໍ່ມີງົບປະມານໃນການຂົນສົ່ງ.

ກອງປະຊຸມຄັ້ງນີ້ ໄດ້ສໍາເລັດໃນເວລາ 16:30 ຂອງວັນທີ 09 ກຸມພາ 2021.

ນະຄອນຫຼວງວຽງຈັນ, ວັນທີ 19 ກຸມພາ 2021

| | |
|---|---|
| **ປະທານກອງປະຊຸມ** | **ຜູ້ສັງລວມເນື້ອໃນກອງປະຊຸມ** |
| ທ່ານ ຮສ. ດຣ. ພູທອນ ເມືອງປາກ | ທ່ານ ບຸດສາລີ ລັດຕະນະ |
| ຮອງລັດຖະມົນຕີກະຊວງສາທາລະນະສຸກ, | ຜູ້ປະສານງານ ແລະ ການເງິນ |
| ປະທານຄະນະກໍາມະການປະສານງານກອງທຶນໂລກ | ກອງເລຂາຄະນະກໍາມະການປະສານງານກອງທຶນໂລກ |